ສຳນັກງານ ຄຄຊ
ເລກທີ...0858...
ວັນທີ...22 AUG 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 34 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 22 ສິງຫາ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 05-09/08/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,94% ເມື່ອທຽບໃສ່ເອີໂຣ ເນື່ອງຈາກທະນາຄານກາງ ສ. ອາເມລິກາ ໄດ້ປັບຫຼຸດອັດຕາດອກເບ້ຍນະໂຍບາຍໄລຍະສັ້ນລົງ 0,25% ຈາກລະດັບ 2,25%-2,50% ມາຢູ່ທີ່ລະດັບ 2,00%-2,25% ຊຶ່ງເປັນການປັບຫຼຸດອັດຕາດອກເບ້ຍນະໂຍບາຍໄລຍະສັ້ນຄັ້ງທຳອິດໃນຮອບ 11 ປີ ເພື່ອເປັນການກະຕຸ້ນເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ເປັນການກະຕຸ້ນເງິນເຟີ້.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 29/07-02/08/2019 | ອາທິດນີ້ 05-09/08/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1104 | 1,1209 | -0,94% |
| ເຢນ/ໂດລາ | 106,93 | 105,84 | 1,03% |
| ບາດ/ໂດລາ | 30,800 | 30,730 | 0,23% |
| ເປໂຊ/ໂດລາ | 51,47 | 51,88 | -0,79% |
| ຣູເປັຍ/ໂດລາ | 14.185,00 | 14.195,00 | -0,07% |
| ໂດລາສິງກະໂປ/ໂດລາ | 1,3769 | 1,3824 | -0,40% |
| ຢວນ/ໂດລາ | 6,9416 | 7,0602 | -1,68% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 3,91% ຈາກ 54,94 ໂດລາ/ບາເຣວ ມາເປັນ 52,79 ໂດລາ/ບາເຣວ ເນື່ອງຈາກປະລິມານການຜະລິດນ້ຳມັນດິບຂອງປະເທດຜູ້ຜະລິດນ້ຳມັນລາຍໃຫຍ່ຂອງໂລກເປັນຕົ້ນ: ສ. ອາເມລິກາ ໂດຍສະເພາະການຜະລິດນ້ຳມັນດິບໃນແຫຼ່ງ Permian ແລະ ອ່າວແມັກຊິໂກທີ່ດຳເນີນການຜະລິດຢ່າງເຕັມກຳລັງ ຫຼັງຈາກທີ່ປະເຊີນກັບພາຍຸເຮີລິເຄນແບຣີ ໃນໄລຍະຜ່ານມາ;
- ລາຄາຄຳ ເພີ່ມຂຶ້ນ 4,66% ຈາກ 1.436,98 ໂດລາ/ອອນ ມາເປັນ 1.503,95 ໂດລາ/ອອນ ເນື່ອງຈາກເງິນໂດລາອ່ອນຄ່າລົງ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ.

## 2. ສະພາບເງິນຕາພາຍໃນ

### 2.1 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 08/2019 ຄາດວ່າຢູ່ໃນລະດັບ 3,19%.

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,30% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,27%.;
- ປະລິມານເງິນ M2 ຫຼຸດລົງ 0,42% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,13%.

### 2.3 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,27% ແລະ ອ່ອນຄ່າລົງ 0,51% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 2,40% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 8,17% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 29/07-02/08/2019 | | | ອາທິດນີ້ 05-09/08/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8,790.97 | 8,826.46 | 8,802,47 | 8,812.01 | 8,842.14 | 8,826.24 | -0,24% | -0,18% | -0,27% | -2,39% | -2,43% | -2,40% |
| ບາດ | 288,46 | 289,87 | 289,27 | 289.91 | 291.33 | 290.76 | -0,50% | -0,50% | -0,51% | -8,18% | -8,19% | -8,17% |

### 2.4 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (02-08/08/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ຊື້ເງິນໂດລາສຸດທິ 33,73 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 47,75 ລ້ານໂດລາ ແລະ ຂາຍເງິນໂດລາ ໄດ້ 14,02 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 229,55 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 136,78 ລ້ານບາດ ແລະ ຂາຍເງິນບາດໄດ້ 366,33 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດ ເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 15,83% ແລະ ເງິນບາດຫຼຸດລົງ 45,85%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ບໍ່ມີການເຄື່ອນໄຫວ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ເປັນເງິນບາດຈຳນວນ 0,20 ລ້ານບາດ;

[1]% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ບໍ່ມີການເຄື່ອນໄຫວ.

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດກ່ອນ 26/07-01/08/2019 | | ອາທິດນີ້ 05/08-09/08/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **31,54** | **268,80** | **47,75** | **136,78** | **51,40%** | **-49,11%** |
| - ທ/ຄທຸລະກິດລັດ | 10,03 | 155,61 | 9,53 | 36,89 | -4,99% | -76,29% |
| - ທ/ຄທຸລະກິດອື່ນໆ | 21,51 | 113,19 | 38,22 | 99,89 | 77,68% | -11,75% |
| **2. ການຂາຍເງິນຕາຕ່າງປະເທດ** | **21,79** | **660,30** | **14,02** | **366,33** | **-35.66%** | **-44.52%** |
| - ທ/ຄທຸລະກິດລັດ | 7,95 | 140,38 | 4,31 | 82,19 | -45.79% | -41.45% |
| - ທ/ຄທຸລະກິດອື່ນໆ | 13,84 | 519,92 | 9,71 | 284,14 | -29.84% | -45.35% |
| **ຊື້-ຂາຍສຸດທິ ທທກ** | **9,75** | **-391,50** | **33,73** | **-229,55** | **245,95%** | **-41,37%** |
| - ຜົດດ່ຽງຊື້-ຂາຍ | 30,91% | -145,65% | 70,64% | -167,82% | 128,53% | 15,22% |
| - ມູນຄ່າການຊື້-ຂາຍ | **53,33** | **929,10** | **61,77** | **503,11** | **15,83%** | **-45,85%** |
| **3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ** | **0,00** | **0,00** | **0,00** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 0,00 | 0,00 | 0,00 | 0,00 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **3,00** | **3,00** | **0,00** | **0,20** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານປະຈຳອາທິດວັນທີ (02-09/08/2019) ຈຳນວນ 48,82 ລ້ານໂດລາ. ໃນນັ້ນ, ກະແສເງິນໄຫຼອອກມີຈຳນວນ 184,21 ລ້ານໂດລາ (ສ່ວນໃຫຍ່ແມ່ນຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 108,73 ລ້ານໂດລາ, ລາຍຈ່າຍອື່ນໆ ຈຳນວນ 16,99 ລ້ານໂດລາ ແລະ ຖອນເງິນຝາກຈາກທະນາຄານທີ່ຕັ້ງຢູ່ລາວ ຈຳນວນ 42,07 ລ້ານໂດລາ). ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 135,39 ລ້ານໂດລາ (ສ່ວນໃຫຍ່ແມ່ນຮັບຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 41,70 ລ້ານໂດລາ, ລາຍຈ່າຍອື່ນໆ ຈຳນວນ 17,99 ລ້ານໂດລາ, ຮັບເງິນລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 25,38 ລ້ານໂດລາ ແລະ ຖອນເງິນຝາກຈາກສະຖາບັນການເງິນຢູ່ຕ່າງປະເທດ ຈຳນວນ 43,70 ລ້ານໂດລາ).

### 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 459 ສະບັບ ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 201 ສະບັບ, ລວມມູນຄ່າໂອນທັງໝົດ 580,11 ຕື້ກີບ, ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 267,15 ຕື້ກີບເທົ່າກັບ 85,36%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (02-09/8/2019) ມີທັງໝົດ 4.119 ຄັ້ງ ຫຼຸດລົງ 213 ຄັ້ງທຽບໃສ່ອາທິດທີ່ຜ່ານມາ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ມີທັງໝົດ 1.269,11 ຕື້ກີບ ທຽບໃສ່ອາທິດຜ່ານມາເຫັນວ່າ ຫຼຸດລົງ 246,85 ຕື້ກີບ ຫຼື ເທົ່າກັບ 16,28%. ໃນນັ້ນ, ກະຊວງການ

ເງິນມີການໂອນເງິນຈຳນວນ 83 ຄັ້ງ, ລວມມູນຄ່າໂອນທັງໝົດ 148,51 ຕື້ກີບ ເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນເງິນ 62,07 ຕື້ກີບ ກວມເອົາ 71,80%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 765,89 ຈຸດ ຫຼຸດລົງ ຈາກ 777,50 ຈຸດ ຫຼື ເທົ່າກັບ 1,49% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 952.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,45 ຕື້ກີບ ເພີ່ມຂຶ້ນ 17,82% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດກວມເອົາ 22,87%. ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ໃນອາທິດນີ້ແມ່ນມາຈາກການເພີ່ມຂຶ້ນຂອງລາຄາຮຸ້ນ PCD.

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>

| ບໍລິສັດ | ອາທິດນີ້ (26 ກໍລະກົດ- 01 ສິງຫາ 2019) | | | ອາທິດນີ້ (02-08 ສິງຫາ 2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາ ປ່ຽນແປງ (%) |
| **BCEL** | 79.600 | 468.915.000 | 6.000 | 53.200 | 318.955.000 | 6.000 | -33,17 | -31,98 | - |
| **EDL-GEN** | 5.200 | 19.677.000 | 3.790 | 72.900 | 270.842.000 | 3.790 | 1.301,92 | 1.276,44 | -2,37 |
| **LWPC** | | - | 7,150 | - | - | 7,150 | - | - | - |
| **PTL** | 20.200 | 9.140.000 | 450 | 7.400 | 3.330.000 | 450 | -63,37 | -63,57 | - |
| **SVN** | 100 | 210.000 | 2.050 | 1.000 | 2.200.000 | 2.050 | 900,00 | 947,62 | - |
| **PCD** | 1.000 | 1.000.000 | 1.000 | 300 | 330.000 | 1.000 | -70,00 | -67,00 | 5,00 |
| **LCC** | 100 | 205.000 | 2.050 | - | - | 2.050 | -100,00 | -100,00 | - |
| **MHTL** | - | - | 2.950 | - | - | 2.950 | - | - | - |
| **LAT** | - | - | 750 | 100 | 75.000 | 750 | - | - | - |
| **VCL** | 700.100 | 735.110.000 | 1.100 | 817.600 | 858.480.000 | 1.100 | 16,78 | 16,78 | -4,55 |
| ທັງໝົດ | 806.300 | 1.234.257.000 | | 952.500 | 1.454.212.000 | | 18,13 | 17,82 | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ທຫລ ໄດ້ຮ່ວມກອງປະຊຸມ ແລະ ປຶກສາຫາລືວຽກງານທີ່ຈຳເປັນຈຳນວນໜຶ່ງເປັນຕົ້ນ: ❶ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ສິງຫາ 2019; ❷ກອງປະຊຸມປຶກສາຫາລືກົນໄກການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດທີ່ຍັງຄ້າງຊຳລະ; ❸ກອງປະຊຸມຂົງເຂດພາກພື້ນເພື່ອກະກຽມໃຫ້ແກ່ກອງປະຊຸມສຸດຍອດລະດັບພາກພື້ນ ເພື່ອຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ❹ກອງປະຊຸມຝຶກອົບຮົມວຽກງານສືບສວນ ແລະ ສອບສວນດ້ານການເງິນທີ່ແຂວງວຽງຈັນ
- ທຫລ ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສຳຄັນ ແລະ ວຽກງານປິ່ນອ້ອມຈຳນວນໜຶ່ງເປັນຕົ້ນ: ❶ກອງປະຊຸມຜ່ານຮ່າງແຜນດຳເນີນງານການເຂົ້າເຖິງການບໍລິການທາງດ້ານການເງິນຂອງ ສປປ ລາວ ໄລຍະ 08 ປີ (2018-2025); ❷ກອງປະຊຸມຮຽບຮຽງຮ່າງກົດໝາຍວ່າດ້ວຍຫຼັກຊັບ; ❸ກອງປະຊຸມຄົ້ນຄວ້າວຽກກອງທຶນພັດທະນາແຂວງໄຊສົມບູນ; ❹ກອງປະຊຸມປຶກສາຫາລືກ່ຽວກັບໂຄງການສະໜັບສະໜູນການຂ້າມຜ່ານສູ່ມາດຕະຖານສາກົນດ້ານ

ມາດຕະຖານສາກົນດ້ານການລາຍງານການເງິນ (IFRS); ❺ກອງປະຊຸມຝຶກອົບຮົມໃນຫົວຂໍ້: "ບັນຊີທະນາຄານ"; ❻ກອງປະຊຸມສຳມະນາແລກປ່ຽນບົດຮຽນໃນຫົວຂໍ້: "ການຄຸ້ມຄອງທະນາຄານທຸລະກິດຕາມຄວາມສ່ຽງ" ແລະ ❼ຈັດຝຶກອົບຮົມໃນຫົວຂໍ້: "Financial Safeguard Measures and Liberalization of Sub-sectors under Banking and Other Financial Services".

- **ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ລົງກວດກາທະນາຄານຮ່ວມທຸລະກິດລາວ-ຫວຽດ ສາຂາສະຫວັນນະເຂດ; ❷ອອກຂໍ້ຕົກລົງວ່າດ້ວຍການຮັບຮູ້ການປ່ຽນແປງທີ່ຕັ້ງສຳນັກງານໃຫຍ່ຂອງທະນາຄານຫວຽດຕິນລາວ ຈຳກັດ; ❸ລົງກວດກາສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກປະຈຳປີ 2018 ຈຳນວນ 04 ແຫ່ງ (ຈະເລີນຊັບ, ວາລີລັກ, ສົມຫວັງທັນໃຈ ແລະ ຈະເລີນໄວ) ແລະ ❹ສຳເລັດການແນະນຳບັນດາທະນາຄານທຸລະກິດຈຳນວນ 05 ທະນາຄານກ່ຽວກັບການກະກຽມຄວາມພ້ອມໃນການນຳໃຊ້ລະບົບການໂອນເງິນອັດຕະໂນມັດ (ATS: Automatic Transfer System).

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ.
- **ທຫລ ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກ ເພື່ອປຶກສາຫາລືວຽກງານທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ສືບຕໍ່ເຂົ້າຮ່ວມກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ສິງຫາ 2019; ❷ກອງປະຊຸມສຳມະນາໃນຫົວຂໍ້: "Presentation on the Lao Economic Monitor July 2019"; ❸ກອງປະຊຸມທະວິພາຄີລະຫວ່າງ ທຫລ ແລະ ທະນາຄານປະຊາຊົນຈີນ ທີ່ປະເທດ ສປ. ຈີນ ແລະ ❹ກອງປະຊຸມສຳມະນາໃນຫົວຂໍ້: "Bangkok Sustainable Banking Forum 2019: An Industry Wake-up Call" ທີ່ ປະເທດໄທ.
- **ທຫລ ກະກຽມຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆເປັນຕົ້ນ:** ❶ກອງປະຊຸມເປີດກວ້າງປະກອບຄຳເຫັນຕໍ່ຮ່າງດຳລັດວ່າດ້ວຍການເງິນ ແລະ ການບັນຊີຂອງ ທຫລ; ❷ກອງປະຊຸມຜ່ານຮ່າງດຳລັດວ່າດ້ວຍຄັງສຳຮອງເງິນຕາຕ່າງປະເທດ; ❸ກອງປະຊຸມປຶກສາຫາລືກ່ຽວກັບຕົວຊີ້ວັດການເບີກຖອນເງິນກູ້ນຳທະນາຄານໂລກ; ❹ກອງປະຊຸມຄົ້ນຄວ້າວຽກງານທັນສູນເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ເປັນນິຕິບຸກຄົນ; ❺ກອງປະຊຸມພົບປະກັບສາຂາທະນາຄານສົ່ງເສີມກະສິກຳທົ່ວປະເທດ; ❻ກອງປະຊຸມກ່ຽວກັບການຄົ້ນຄວ້າປະເມີນດ້ານທຸລະກິດ ແລະ ດ້ານເຕັກນິກຂອງຕະຫຼາດຫຼັກຊັບລາວ ແລະ ❼ກອງປະຊຸມໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນໃຫ້ແກ່ພະນັກງານຢູ່ຫໍພິພິທະພັນໄກສອນພົມວິຫານ.
- **ທຫລ ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ**ຄະນະຊ່ຽວຊານສູນຂໍ້ມູນຂ່າວສານສິນເຊື່ອແຫ່ງຊາດຈາກປະເທດ ສສ. ຫວຽດນາມ.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ພູມມະລີ ສີຣິພົນເດດ